# ແພອີໂປ້ ຫລື ຜ້າຂາວມ້າ

ອາຈາຣຍ໌ ບຸນທົງ ຄົມມະຣາຊ ເສີມຂຍາຍບົດຂຽນຂອງ ພ. ພວງສະບາ

ເມື່ອເວົ້າເຖິງ "ແພອີໂປ້" "ຜ້າຂະມ້າ" ຫລື "ຜ້າຂາວມ້າ" ຄົນລາວແຕ່ເຫນືອຮອດໃຕ້ ນັບແຕ່ນ້ອຍ ເຖິງໃຫຍ່ ນັບແຕ່ຄົນຢ່າງ ນຳຖຸນິນ ໄປຫາພໍ່ຄ້າຊາວຂາຍ ເສດຖີ ມີມັ່ງ ແລະ ໂດຍສະເພາະ ກໍ ແມ່ນຊາວໄຮ່ ຊາວນາ ຕ່າງກໍຮູ້ຈັກດີ.



ກະຈັ່ງວ່າແພອີໂປມີຫລາຍຊື່ຫລາຍສຽງຮຽກເອີ້ນກັນແຕກ ຕ່າງໄປ ແຕ່ລະທ້ອງຖິ່ນ ມັນກໍຫາກ ແມ່ນ ຜ້າອັນດຽວກັນ ບາງທ້ອງ ຖິ່ນກໍເອີ້ນວ່າ "ຜ້າຕາໂລ້"ຫລືຜ້າອາບນ້ຳກໍວ່າໄປໃຫ້ວ່າທ້ອງຖິ່ນໃດ ມັກ ເອີ້ນ ແນວໃດກໍຕາມໃຈທ່ອງຖິ່ນນັ້ນວ່າຊັ້ນສາ.

"ແພອີໂປ້" ມີມາຄູ່ກັບຄົນລາວ ເທິງນານ ປານໃດແຕ່ເປີງໃດ? ຄຳຖາມນີ້ຖາມງ່າຍ ແຕ່ຫາກ ວ່າຕອບ ຍາກ ກໍຍ້ອນວ່າບໍ່ມີ ນັກຄົ້ນ ຄ້ວາໂບຮານຄະດີ ຜູ້ໃດ ບັນທຶກເປັນຂໍ້ມູນເອົາໄວ້ຢ່າງຄັກແນ່ ມັນກໍ ບໍ່ຄື ກັນກັບ ນັກປະດິດຄິດສ້າງ ສມັຍໃຫມ່ຄື ກັນກັບ **Pasteur, Newton, Honda, Suzuki** ແລະ ອື່ນໆ ທີ່ຈາຣຶກຊື່ຂອງ ເພີ່ນໄວ້ ໃນການປະດິດຄິດຄົ້ນ ຕ່າງໆ.

ສ່ວນຫລາຍກໍມັກຈະຕອບ ແບບກຳປັ້ນທຸບດິນ ວ່າ ແພອີໂປ້ ເກີດມາຄູ່ກັບກັບ ຄົນລາວແຕ່ສມັຍ ປູ່ສັງ ກະສາຍ່າສັງກະສີ ແລະ ຄູ່ຄອງພົວພັນກັບການດຳຣົງ ຊີວິດຂອງຄົນລາວຕລອດມາຈົນເທົ້າ ທຸກວັນນີ້. ຖ້າຈະ ວ່າໄປແລ້ວ ຄົນລາວແຕ່ ສມັຍໃດໆມາ ກໍມີພູມປັນ ຍາ ໃນການຍິບປັກຖັກຮ້ອຍສາມາດສ້າງສາ ເຄື່ອງນຸ່ງ ຂອງຖືເປັນ ເອກກະລັກ ຂອງໂຕເອງ ນອກຈາກເຄື່ອງ ໃມ້ເຄື່ອງມືໃນການ ດຳຣົງຊີບ ເຊັ່ນວ່າ ຂ້ອງ ໄຊກະດົ້ງກະຕ່ຳແລະອື່ນໆອີກໃນການດັກ ສັດຫາປູຫາປາຕລອດທັງອຸປກອນທຸ່ນແຮງໃນການ ເຮັດໄຮ່ ໃສ່ນາ.

ຢູ່ໃນຫນັງສືວັນນະຄະດີຫລືຫນັງສືຜູກຫນັງສືທັມເຣື່ອງສຳ ຄັນສຳຄັນ ກໍບໍ່ເຫັນຊີໄດ້ກ່າວ ຖືງເຣື່ອງແພອີໂປ້ເປັນກະບະກະບວນ ມີແຕ່ຢູ່ໃນ ກາບປູ່ສອນ ຫລານກ່າວໄວ້ຫນ້ອຍນຶ່ງວ່າ"ໄດ້ເມັຍດີຜິວ ນຸ່ງຜ້າໃຫມ່" ກະແປວ່າ ໄດ້ເມັຍຄ້ານ ຜິວນຸ່ງຜ້າເກົ່າ ຜ້າຂາດອີ່ຫຍັງ ທຳນອງນີ້. ແນວໃດກໍຕາມ ແພປີໂປ້ແພຕາໂລ້ຫລືຜ້າຂະມ້ານີ້ແມ່ນ ຕິດພັນ ກັບຄົນລາວມາຕລອດ ກ້າເວົ້າໄດ້ວ່າສມັຍກ່ອນບ້ານເມືອງ ມີການປ່ຽນ ແປງ ທຸກເຮືອນ ມີແພອີໂປ້ ບາງເຮືອນພວກຜູ້ຊາຍ ມີກັນທຸກ ຄົນຂອງໃຜ ຂອງລາວ ແຕ່ວ່າຢູ່ໃນຊົນນະບົດ ຜູ້ຍິງກໍມັກ ໃຊ້ ແພອີໂປ້ຄືກັນ. ເວລານີ້ ຄົນລາວຢູ່ຕ່າງ ປະເທດນັ້ນ ເຫັນແຕ່ ເພິ່ນ ນິຍົມໃຊ້ ແພບ່ຽງ ເປັນຜ້າ ໃຫມ ເວລາໄປເຮັດບຸນຫລືພິທີທາງ ສາສນາ ທໍ່ນັ້ນ.

ແພອີໂປ້ ຂອງລາວເປັນລັກສະນະສີ່ຫລ່ຽມອ່າວ ໃຫຍ່ແດ່ ຈັກຫນ່ອຍ ສ່ວນແພອີໂປ້ ຂອງຂເມັນກໍມີຄືກັນແຕ່ຕາມັນນ້ອຍກວ່າ ແລະຜືນຜ້າ ສ່ວນຫລາຍ ກໍນ້ອຍ ຄື ກັນ ກອງທັບປົດປ່ອຍຂເມັນ ແດງ ແຈກຜ້າ ຂະມ້າໃຫ້ແກ່ ທະຫານຂອງເພີ່ນເອົາໄປໃຊ້ ຄຽນຄໍ.

ເມື່ອເອົາຜ້າຂະມ້າ ຂອງລາວ ກັບຂອງຂເມັນ ມາວາງ ຮຽງກັນ ສາມາດ ບອກໄດ້ໂລດວ່າ ອັນໃດແມ່ນຂອງ ຂເມັນ ອັນໃດ ແມ່ນ ຂອງລາວ ! ຄຸນນະປະໂຍດ ຂອງຜ້າຂະມ້າ ມີມາກມາຍ ກ່າຍກອງບໍ່ສາມາດທີ່ຈະພັລລະນາ ໄດ້ຫມົດຖ້າຈະ ເວົ້າ ສຳນວນ ນວຍຈີນສຳນັກສ້ຽວຫລິນກໍຄົງຈະວ່າເປັນຜ້າສາຣະພັນນັງກອນສະທ້ານຟ້າ ຄົງຈະບໍ່ມີຜິດນັບແຕ່ ເອົາ ໂພກຫົວກັນແດດ ເຊັດເຫື່ອເຊັດໄຄ ໃຊ້ ເປັນຜ້າ ອາບນ້ຳເຊັດຫນ້າຖູຂີ້ໄຄ ເອົາມານຸ່ງ ຕາງໂສ້ງ (ຜູ້ຂຽນ) ນຸ່ງຢູ່ເຮືອນ ເວລາຮ້ອນ ນຸ່ງເລາະບ້ານ (ກະພໍມີໃຫ້ເຫັນຢູ່ ແຕ່ບໍ່ຫລາຍ) ເອົາມາ ຄຸມທີ່ມເວລານອນ ໃຊ້ ເປັນວີ ພັດຍຸງ ພັດເອົາລົມ ເຊັດ ມືປັດກວາດບ່ອນນັ່ງບ່ອນນອນ ໃຊ ້ເປັນຫມອນຫນຸນຫົວ ຄຽນແອວ ຄຽນຫົວ ຂອດຫໍ່ເຂົ້າ ໄປກິນນຳທາງ ພົກເງິນເຮັດເປັນຫໍ່ ເວລາໄປຊື້ງົວຄວາຍ ຕາມບ້ານ ນອກຕຳຣວດທີ່ບໍ່ມີກັບມືກໍເອົາຜ້າຂະມ້ານີ້ລະ ມັດສອກ ຜູ້ຮ້າຍຊ າຍໂຈນ ໃຊ້ບ່ຽງເວລາໄປວັດ ໃນເວ ລາເຮັດ ບຸນເຮືອນ ຜູກແຂນສູ່ຂວັນ ໃຊ້ປູນອນ ຜູກ ເຮັດອູ່ໃຫ້ ລູກນ້ອຍ ພວກເດັກນ້ອຍ



ເກົ້າປີ-ສິບປີ ມັດ ເຮັດເປ ຫລືໂອ່ນຊາ ເວລາ ຂາດແລ້ວກໍຕັດ ເອົາມາ ເຮັດ ຜ້າອ້ອມ ເຖິງຊິ ເກົ່າແຫ້ງ ກໍບໍ່ຍັງມີ ປະໂຍດ ເອົາມາ ເຮັດຜ້າເຊັດມື ຜ້າຖູເຮືອນ ຜ້າລ້າງຖ້ວຍ ບາດຊິ ສຸດທ້າຍ ກໍແມ່ນ ເອົາມາລີ້ວ ເຮັດຝ້າຍຈູດ ອູດຍຸງ ຫລື ຄຽນ ໄມ້ໄຜ່ເຮັດກັນຈູ໊ ໃສ່ເຮືອໄຟ ຈັ່ງຄ່ອຍ ແລ້ວ.

(ເວົ້າຄວາມຂີ້ຮ້າຍ ຜູ້ບ່າວຜູ້ສາວ ມັກຮັກກັນ ບໍ່ໄດ້ກັນ ອົກຫັກນ້ອຍໃຈມາຂ້າໂຕຕາຍລາງຄົນກໍເອົາ ແພອີໂປ້ ນີ້ລະ ຜູກຄໍຕາຍ).

ແຕ່ດັ້ງເດີມມາແພອີໂປ້ ຕໍ່າຂຶ້ນເອງໃຊ້ ປະຈໍາ ຄອບຄົວ ຂອງໃຜຂອງລາວ ຝ້າຍກໍແມ່ນ ຝ້າຍທີ່ເຂັນ ເອົາເອງ ກີ່ກໍແມ່ນໃຊ້ປະຈໍາຄອບຄົວ ຕົ້ນແບບຂອງ ແພອີໂປ້ ແມ່ນຕໍ່າໃຫ້ເປັນຕາດໍາຂາວ ຂນາດເທົ່າກັນ ຊຶ່ງ ເຂົ້າກັບ ການຕີຄວາມໝາຍ ຂອງບາງທ້ອງຖິ່ນ ທີ່ເອີ້ນ ວ່າ ແພຕາໂລ້ ຊຶ່ງພ້ຽນ ມາຈາກ ແພຕາກາໂຣ ອັນແປວ່າ ກະດານ ຫລື ແປ້ນຫລືດິນທີ່ມີສີ່ຫລ່ຽມ ນິນທິນໃນພາສາ ຝຣັ່ງ ອີກຕໍ່ໜຶ່ງ ສ່ວນເຊີງ ຜ້າທັງ ສອງເບື້ອງ ບໍ່ໄດ້ ເຮັດເປັນຕາ ແຕ່ປ່ອຍໃຫ້ເປັນ ລວງຍາວຂາວສລັບດໍາ ລ່ອງ ກັນທັງສອງສົ້ນ ຍາວປະມານ ສອງຫາສາມຄືບ ສ່ວນຄວາມຍາວ ທັງໝົດ ຂອງຜ້ານັ້ນປະມານນຶ່ງວາ ຄວາມກວ້າງຂອງຜ້ານັ້ນປະມານ ນຶ່ງສອກ (ໝາຍເຫດ ມາດຕຣາວັດແທກ ຂອງລາວ ນັບເອົານີ້ວມື ຫລືຂໍ້ມື, ຄືບຂອງມື, ສອກ, ແຂນ ແລະວາ ບໍ່ໄດ້ມີມາຕຖານ ເປັນແມຕຕຣິກ ດັ່ງນັ້ນ ສັ້ນຍາວ ຫລຸດລື່ນກັນ ກໍສຸດແລ້ວ ແຕ່ ແຂນຂອງ ຜູ້ແທກ)ແຕ່ກ່ອນສັງເກດ ເຫັນວ່າ ແພອີໂປ້ ຖືກຕໍ່າ ອອກມາ ເປັນ ລາຍ ດໍາຂາວ ສລັບກັນ ເປັນ ສ່ວນ ຫລາຍ ແຕ່ຜ້າ ໃຫມ່ນັ້ນ ເປັນ ສີຂາວ ສລັບສີຟ້າ. ມາ ສມັຍນີ້ ນິຍົມກັນ ສລັບສີແສດ ສີ ແດງ ສີມ່ວງກໍມີ ເປັນຫຍັງ ເພີ່ນ ຈຶ່ງມັກແຕ່ສີດໍາ ສລັບຂາວ ? ອັນນີ້ກໍພໍຊິເດົາໄດ້ວ່າ ຖ້າຈະຕໍ່າອອກມາເປັນສີຂາວໝົດ ກໍຈະໄປ ຫລີ້ງກັບ ຜ້າອາບນໍ້າຝົນຂອງ ຄຣູບາ ຢູ່ວັດ ດັ່ງນັ້ນ ເພື່ອປ້ອງ ກັນການໄຄ່ວເຂ ກໍເລີຍມີການສລັບສີ ເກີດຂຶ້ນ. ໂດຍການ ເອົາປອຍຝ້າຍໄປຍ້ອມດໍາ ດ້ວຍການ ແຊ່ ນໍ້າໝາກເກືອ ແຊ່ໄວ້ ປະມານສາມຫາເຈັດວັນ ເມື່ອ ເຂົ້ານໍ້າເຂົ້າໃນດີແລ້ວ ຈຶ່ງເອົາມາຕົ້ມອີກ ເສັດແລ້ວ ຈຶ່ງເອົາ ມາລ້າງນໍາໄລ ເອົາຕາກແດດ ຜຶ່ງໄວ້ ຈົນແຫ້ງ ຈັ່ງ ຄ່ອຍເອົາມາປັ່ນໃສ່ຫລອດລໍຖ້າ ການຕໍ່າ ຕໍ່ໄປ.

ຖ້າວ່າ ຢາກໄດ້ສີຟ້າກໍເອົາໄປແຊ່ໝາກຄາມ ຫລືຢາກໄດ້ ສີແດງ ກໍເອົາໄປແຊ່ນໍ້າຄັ່ງຊຶ່ງ ມີວິທີການ ຊັບຊ້ອນ ຫລາຍຂັ້ນ ຕອນຕື່ມອີກ ທັ້ງນີ້ ຍ້ອນວ່າ ໝາກເກືອຫາ ໄດ້ງ່າຍ ກວ່າຕລອດທັງສີດໍາ ທົນທານ ກວ່າສີອື່ນ ແລະ ຜ້າຂະມ້າ ກໍເວົ້າໄດ້ວ່າສາມາດໃຊ້ໄດ້ ສາຣະພັດປະໂຍດ ດັ່ງທີ່ ກ່າວມາແລ້ວ ຈຶ່ງບໍ່ຈໍາເປັນ ຈະໃຫ້ເປັນ ສີທີ່ ອວດອ້າງ ກັນກໍໄດ້ ຂໍ້ສັງເກດອີກ ຢ່າງນຶ່ງກໍແມ່ນ ສີແສດສີແດງນັ້ນ ບໍ່ຄ່ອຍຖືກທາດ ກັບ ງົວຄວາຍປານໃດ ຖ້ານຸ່ງຜ້າ ສີແດງ ໄປກາງທົ່ງ ງົວຄວາຍເຫັນ ອາດຈະ ໄລ່ຊົນກໍມີ ກາຍເປັນ ເຄາະ ເປັນຮ້າຍຕື່ມອີກ.



ຕໍ່ມາເມື່ອບ້ານເມືອງຈເຣີນ ການຄົມມະນາຄົມ ຄ້າຂາຍໄປມາຫາສູ່ ກັນໄດ້ສດວກ ສີຍ້ອມຜ້າ ໄດ້ນໍາເຂົ້າ ມາຈໍາໜ່າຍ ເປັນຈໍານວນມາຫລາກຫລາຍ ສາຣະພັດ ບໍ່ແມ່ນແຕ່ເທົ່ານັ້ນ ຜ້າແພ ແຜ່ນແພ ທຸກສິ່ງ ທຸກຢ່າງ


© Laonet Magazine, July 2006



ກໍ່ຖືກນຳເຂົ້າມາສູ່ຕລາດຮ້ານຄ້າ ບຽດບຽນ ວິຖີຊີວິດ ການດຳເນີນຊີວິດປະຈຳວັນ ທັນໄປໃຊ້ ແຕ່ເງິນຄຳເພື່ອ ນຳ ເອົາມາແລກປ່ຽນສິນຄ້າ ສຳເລັດຮູບ ເພາະມັນງ່າຍ ແລະສດວກ. ຍັງດີແຕ່ວ່າເວລານີ້ ອຳນາດ ການປົກຄອງ ຂອງລາວ ໄດ້ທຳການຮື້ຟື້ນ ພູມປັນ ຍາການຜລິດສ້າງ ຕ່ຳແຜ່ນແພຂອງລາວ ກັບຄືນຂຶ້ນ ມາໃໝ່ ອັນທີ່ເອີ້ນວ່າ ຈະບໍ່ເປັນຄວາມຈິງອີກ ເພາະມັນເປັນເອກກະລັກຂອງ

ຊາວລາວທີ່ສາມາດອວດອ້າງ

ຊາວໂລກຕໍ່ມາເຖິງປັດຈຸບັນນີ້ຊາວຕ່າງດ້າວທີ່ ຍອມຈ່າຍເງິນຄ່າເຮືອບິນ ຂ້າມນ້ຳຂ້າມທະເລໄປທ່ຽວ ເມືອງລາວ ຍ້ອນຢາກເຫັນທັມມະຊາດທີ່ສວຍງາມ ແລະ ບໍຣິສຸດ ທີ່ສະພາບແວດລ້ອມ ຍັງບໍ່ທັນຖືກທຳລາຍຈາກ ເທກໂນໂລຈີທັນສມັຍ ພ້ອມດຽວກັນ ເຂົາເຈົ້າກໍ່ໄດ້ເຫັນວິ ຖີຊ ີວິດການດຳເນີນຊີວິດປະຈຳວັນຂອງຄົນລາວ ສິ່ງນຶ່ງ ໃນນັ້ນກໍ່ແມ່ນ ການຕ່ຳແຜ່ນແພ.

ຂ້າພະເຈົ້າຂໍວິງວອນຕໍ່ ພໍ່ແມ່ ພີ່ນ້ອງຊາວລາວ ໃນຕ່າງແດນໄດ້ຊ່ວຍກັນ ປະຄັບປະຄອງ ສິລປະວັທນະ ທັມລາວ ດ້ວຍການບອກສອນ ແກ່ລູກຫລານຜູ້ເກີດໃໝ່ ໃຫຍ່ລຸນແລະນຶ່ງໃນນັ້ນ ກໍ່ແມ່ນການທຳຄວາມຮູ້ ຄວາມ ເຂົ້າໃຈກັບ ແພອີໂປ້ ຫລື ຜ້າຂະມ້າຍ້ອນຢ້ານວ່າ ເມື່ອມີ ຄົນເອີ່ຍເຖິງ ຜ້າຂະມ້າ ຫລື ແພອີໂປ້ ລູກຫລານ ຂອງ ເຮົາ ຈະບໍ່ຮູ້ຊຳວ່າ ແພອີໂປ້ ແມ່ນຫຍັງ?

ຂຽນມາເຖິງນີ້ ອັນທີ່ເວົ້າວ່າ ແພອີໂປ້ ຄຽງຄູ່ ກັບຄົນລາວເປັນເອກກະລັກ ມາແຕ່ດຶກດຳບັນ ນັ້ນອາດ ຈະຖືກຢູ່ດອກ ແຕ່ຈະໃຫ້ວ່າຈະຄຽງຄູ່ຢູ່ກັບຄົນລາວຕໍ່ໄປ ນັ້ນ ກໍ່ບໍ່ຮູ້ວ່າຈະໄປ ຮອດໃສ ເພາະໂລກ ນີ້ກຳລັງ ປ່ຽນ ໄປແລະສັງຄົມລາວກໍ່ກ້າວໄປນຳ ຢ່າໃຫ້ເຫລືອເປັນພຽງ ແຕ່ ຄຳເລົ່າລືໃນທີ່ສຸດ ນັ້ນເລີຍເຖາະ.



ອາຈາຣຍ໌ ບຸນທັງ ຄົມມະຣາຊ



ປັ໊ມນ້ຳມັນແຫ່ງນຶ່ງໃນວຽງຈັນທນ໌
ເດືອນ ມະກະລາ 2006

Gas Station at a village near Vientiane
January 2006